# ຄະນະພັກທະນາຄານແຫ່ງ ສປປ ລາວຕີລາຄາສູງຕໍ່ການເຄື່ອນໄຫວຂອງສື່ມວນຊົນ



ໃນຕອນເຊົ້າຂອງວັນທີ 22 ທັນວາ ນີ້, ທີ່ຫ້ອງການທະນາຄານແຫ່ງ ສປປ ລາວ, ທ່ານ ນາງ ພາສີ ພິມມະກອນ ຄະນະພັກທະນາຄານແຫ່ງ ສປປ ລາວ, ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ ໄດ້ຕີລາຄາສູງຕໍ່ບົດບາດ ແລະ ການເຄື່ອນໄຫວຂອງໜ່ວຍງານຂ່າວສານ ເຊິ່ງເປັນຂະແໜງສື່ມວນຊົນຂອງທະນາຄານແຫ່ງ ສປປ ລາວ ທີ່ປະຕິບັດພາລະບົດບາດໜ້າທີ່ເປັນກະບອກສຽງຂອງຄະນະພັກ-ຄະນະນຳ ແລະ ວຽກງານທະນາຄານແຫ່ງ ສປປ ລາວ.

ໂອກາດສົ່ງທ້າຍປີເກົ່າ-ຕ້ອນຮັບປີໃໝ່ ຄສ 2012, ບັນດາພະນັກງານທີ່ສັງກັດຢູ່ໜ່ວຍງານຂ່າວສານ ກໍໄດ້ເຂົ້າອ່ວາຍພອນການນຳຂອງຫ້ອງການທະນາຄານແຫ່ງ ສປປ ລາວ ເຊິ່ງ ທ່ານ ນາງ ພາສີ ພິມມະກອນ ກໍໄດ້ຕາງໜ້າໃຫ້ການນຳຂອງຫ້ອງການ ທຫລ ໄດ້ກ່າວຍ້ອງຍໍສັນລະເສີນຕໍ່ການອຸທິດສະຕິປັນຍາ ແລະ ກຳລັງວັງຊາຂອງບັນດາບັນນາທິການ-ນັກຂ່າວທີ່ປະຕິບັດໜ້າທີ່ລາຍງານຂ່າວໃນສະໜາມຮົບເງິນຕາ, ໂດຍຜ່ານລາຍການວິທະຍຸ-ເວັບໄຊຂອງທະນາຄານແຫ່ງ ສປປ ລາວ, ລາຍການວິທະຍຸແຫ່ງຊາດ, ໂທລະພາບແຫ່ງຊາດແລະສື່ສິ່ງພິມຂອງສູນກາງໃນການເຄື່ອນໄຫວເກາະຕິດຂ່າວສະຖານະການ, ຂ່າວການເຄື່ອນໄຫວຂອງການນຳ, ຂອງ

ຂະແໜງການວິຊາການ ແລະ ຜົນງານດ້ານອື່ນໆຂອງທະນາຄານມາຜະລິດເປັນຂ່າວ, ບົດນຳ-ບົດຄວາມ-ບົດສະເໜີ, ວຽກດີຄົນເດັ່ນ ເຊິ່ງມີເນື້ອຫາສາລະ, ຮັບປະກັນໄດ້ເຖິງການຈັດຕັ້ງປະຕິບັດແນວທາງຂອງພັກ ແລະ ການປະຕິບັດໜ້າທີ່ເປັນເສນາທິການໃຫ້ລັດຖະບານດ້ານເງິນຕາຂອງທະນາຄານແຫ່ງ ສປປ ລາວ.

ພ້ອມດຽວກັນທ່ານນາງ ພາສີ ພົມມະກອນ ຍັງໄດ້ຢືນຢັນວ່າ: ຈະໃຫ້ການສະໜັບສະໜູນ, ສ້າງທຸກເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ສື່ມວນຊົນທະນາຄານແຫ່ງ ສປປ ລາວ ໄດ້ເຄື່ອນໄຫວເຮັດໜ້າທີ່ພາລະບົດບາດຂອງຕົນຕາມຈັນຍາບັນ ແລະ ກົດໝາຍສື່ມວນຊົນ ແລະ ໃນໂອກາດດຽວກັນກໍຮຽກຮ້ອງມາຍັງໜ່ວຍງານຂ່າວສານຈົ່ງເສີມຂະຫຍາຍມູນເຊື້ອອັນດີເດັ່ນ, ຜົນງານອັນຕັ້ງໜ້າໃຫ້ຫຼາຍຂຶ້ນກ່ວາເກົ່າ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດຕາມ 4 ບາດກ້າວບຸກທະລຸຂອງພັກກໍຄືການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ II ຂອງອົງຄະນະພັກທະນາຄານແຫ່ງ ສປປ ລາວ ໃຫ້ປະກົດຜົນເປັນຈິງເປັນກ້າວໆ.